ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ–ໄຟຟ້າລາວ ມະຫາຊົນ

ເລກທີ 2041/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 23 ສິງຫາ 2021

# ໃບລາຍງານ

ຮຽນ: ທ່ານ ຫົວໜ້າ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ
ຜູ້ອໍານວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈໍາກັດ ທີ່ນັບຖື,

ເລື່ອງ: ແຈ້ງມະຕິທີ່ສໍາຄັນຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 3/2021.

- ອີງຕາມຂໍ້ຕົກລົງຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ–ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສໍາຄັນ ຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 3/2021 ວັນທີ 20 ສິງຫາ 2021, ດັ່ງມີລາຍລະອຽດລຸ່ມນີ້:

1. ອະນຸມັດບົດລາຍງານການດໍາເນີນທຸລະກິດ ລວມທັງລາຍງານການເງິນ ຂອງບໍລິສັດ ໄລຍະ 06 ເດືອນຕົ້ນປີ 2021, ເຊິ່ງຜູ້ກວດສອບບັນຊີພາຍນອກໄດ້ມີການທົບທວນແລ້ວ ແລະ ໃຫ້ນໍາເລື່ອງນີ້ລາຍງານຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາອະນຸມັດ.
2. ອະນຸມັດບໍ່ຈ່າຍເງິນປັນຜົນຈາກຜົນການດໍາເນີນທຸລະກິດ ຂອງ ບໍລິສັດ ໄລຍະ 06 ເດືອນຕົ້ນປີ 2021, ເນື່ອງຈາກວ່າບໍລິສັດຈະສໍາຮອງເງິນສົດໄວ້ ເພື່ອຊໍາລະຄືນເງິນຕົ້ນ, ດອກເບ້ຍເງິນກູ້ ລວມທັງຮຸ້ນກູ້ສະກຸນເງິນຕາຕ່າງປະເທດໃນທ້າຍປີ 2021, ແລະ ໃຫ້ນໍາເລື່ອງນີ້ລາຍງານຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາອະນຸມັດ.
3. ອະນຸມັດການປັບປຸງວິໄສທັດ ແລະ ພາລະກິດ ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ເພື່ອໃຫ້ວິໄສທັດ ແລະ ພາລະກິດດັ່ງກ່າວ ກະທັດຮັດ ແລະ ມີເນື້ອໃນຄົບຖ້ວນ ສອດຄ່ອງກັບແຜນຍຸດທະສາດ ຂອງບໍລິສັດ ແລະ ໃຫ້ນໍາເລື່ອງນີ້ລາຍງານຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາອະນຸມັດ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

**ກໍາມະການສະພາບໍລິຫານ/ຜູ້ອໍານວຍການໃຫຍ່**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ດວງສີ ພາຣາຍົກ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392
ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la